# ການປ່ຽນແປງ ສູ່ໂທລະພາບດິຈິຕອລ

## ແມ່ນຫຍັງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບ DTV




### ການປ່ຽນແປງສູ່ໂທລະພາບດິຈິຕອລ (DTV) ແມ່ນຫຍັງ?

ປະຈຸບັນ, ມີຫລາຍສະຖານີໂທລະພາບອອກອາກາດ ທີ່ແຜ່ພາບສັນຍານໂທລະພາບ ທັງລະບົບອານາລອກ ແລະ ດິຈິຕອລ. ພາຍຫລັງ ວັນທີ 17 ເດືອນກຸມພາ, 2009, ສະຖານີໂທລະພາບລະບົບສັນຍານສູງ ຈະແຜ່ພາບແຕ່ໃນລະບົບ ດິຈິຕອລເທົ່ານັ້ນ. ການປ່ຽນແປງສູ່ໂທລະພາບ DTV ຈະມີຜົນສະທ້ອນຕໍ່ຜູ້ຊົມໂທລະພາບລະບົບອອກອາກາດທີ່ບໍ່ເສຍເງິນ (ໂດຍໃຊ້ອັງແຕນຕິດເທິງຫລັງຄາ ຫລື ເອີ້ນວ່າ "ຫູກະຕ່າຍ"). ຖ້າທ່ານເອງຍັງເບິ່ງລາຍການທີ່ອອກແຜ່ພາບອອກອາກາດໃນລະບົບອານາລອກ, ທ່ານກໍ່ຕ້ອງເລີ່ມເຮັດດຳເນີນການບາງຢ່າງກ່ອນ ວັນທີ່ 17 ເດືອນກຸມພາ, 2009.

### ເປັນຫຍັງສະຖານນີແຜ່ພາບຕ້ອງປ່ຽນມາໃຊ້ ລະບົບດິຈິຕອລ?

ກົດຫມາຍແຫ່ງຊາດມີຂໍ້ບັງຄັບໃຫ້ປ່ຽນ, ເຊິ່ງຈະເປີດສັນຍານ ຄວາມຖີ່ໃຫ້ແກ່ການສື່ສານຂອງວຽກຕຳຫລວດ, ດັບເພີງ, ແລະ ຊ່ວຍເຫລືອສຸກເສີນ, ມັນຊ່ວຍໃຫ້ສະຖານີໂທລະພາບແຜ່ພາບລາຍການດ້ວຍພາບ ແລະ ຄຸນນະພາບ ສູງທີ່ດີກວ່າເກົ່າ ແລະ ທາງເລືອກລາຍການທີ່ຫລາຍຂື້ນ, ແລະ ອານຸຍາດໃຫ້ມີການບໍລິການແບບໄລ້ສາຍທີ່ທັນກ້າວໜ້າສຳລັບຜູ້ບໍລິໂພກ.

### ຂ້ອຍຕ້ອງເຮັດແນວໃດເພື່ອກຽມພ້ອມ?

**ທ່ານມີ ສາມ ທາງເລືອກ:**

1. ຕໍ່ໂທລະພາບລະບົບອະນາລອກຂອງທ່ານເຂົ້າກັບກ່ອງປ່ຽນສັນຍານດິຈິຕອລ ເປັນ ອະນາລອກ.
   ກ່ອງປ່ຽນສັນຍານ ດິຈິຕອລ ເປັນ ອະນາລອກ ມີຂາຍ ແລະ ມີລາຄາ $40-$70 ຈ່າຍພຽງຄັ້ງດຽວ. ເພື່ອຊ່ວຍເຫລືອການຊື້, ລັດທະບານສະຫະຫລັດອາເມຣິກາ ໃຫ້ສອງ ຄູປອນຫລຸດລາຄາ ມູນຄ່າ $40 ຕໍ່ຫນຶ່ງຄົວເຮືອນ. ສຳຫລັບຂໍ້ມູນເພີ່ມເຕີມກ່ຽວກັບຄູປອນຫລຸດດລາຄາ, ໃຫ້ເຂົ້າໄປເບິ່ງ www.DTV2009.gov, ຫລື ໂທ 1-888-388-2009 (ຂໍ້ຄວາມສຽງ) ຫລື 1-877-530-2634 (ໂທລະເລກ). ນອກຈາກນັ້ນ, ທ່ານກໍ່ບໍ່ຈຳເປັນຕ້ອງໃຊ້ອັງແຕນອັນໃຫມ່ ຖ້າທ່ານຮັບສັນຍານຂອງຊ່ອງລາຍການລະບົບອານາລອກ 2-51 ໄດ້ດີແລ້ວດ້ວຍອັງແຕນທີ່ໃຊ້ຢູ່ປະຈຸບັນ. ຫລື
2. ຊື້ໂທລະພາບດິຈິຕອລ (ໂທລະພາບທີ່ມີລະບົບດູດສັນຍານລະບົບດິຈິຕອລໃນເຄື່ອງ).
   ທ່ານ <u>ບໍ່ຈຳເປັນຕ້ອງມີ</u> ໂທລະພາບຄວາມລະອຽດສູງ (HDTV) ເພື່ອຈະໄດ້ຮັບຄວາມບັນເທີງໃນການເບິ່ງສັນຍານໂທລະພາບລະບົບດິຈິຕອລ. ທ່ານພຽງຕ້ອງມີ ໂທລະພາບ <u>ດິຈິຕອລ</u> (ຫລືໂທລະພາບລະບົບອານາລອກ ທີ່ຕໍ່ເຂົ້າ ກ່ອງປ່ຽນສັນຍານ ດິຈິຕອລ ເປັນ ອະນາລອກ). ນອກຈາກນັ້ນ, ທ່ານກໍ່ບໍ່ຈຳເປັນຕ້ອງໃຊ້ອັງແຕນອັນໃຫມ່ ຖ້າທ່ານຮັບສັນຍານຂອງຊ່ອງລາຍການລະບົບອານາລອກ 2-51 ໄດ້ດີແລ້ວດ້ວຍອັງແຕນທີ່ໃຊ້ຢູ່ປະຈຸບັນ ຫລື
3. ສະມັກເປັນສະມາຊິກ ບໍລິການໂທລະພາບແບບຈ່າຍຄ່າ. ຖ້າໂທລະພາບຂອງທ່ານຮັບການແຜ່ພາບຂອງສະຖານນີໂທລະພາບທ້ອງຖິ່ນດ້ວຍການບໍລິການໂທລະພາບແບບຈ່າຍຄ່າ ເຊັ່ນ ໂທລະພາບລະບົບສາຍ ຫລື ຈານດາວທຽມ, ການປ່ຽນແປ່ງສູ່ໂທລະພາບດິຈິຕອລ ໄດ້ມີການກະກຽມເປັນທີ່ຮຽບຮ້ອຍແລ້ວ. ບໍລິສັດຈານດາວທຽມ<u>ບໍ່ຈຳເປັນ</u>ຕ້ອງປ່ຽນແປງຊ່ອງໃດໆຂອງພວກເຂົາເປັນລະບົບດິຈິຕອລ. ເຖິງຢ່າງໃດກໍ່ຕາມ, ຖ້າທ່ານມີໂທລະພາບລະບົບອະນາລອກ<u>ທີ່ບໍ່</u>ໄດ້ຮັບການແຜ່ພາບຂອງສະຖານນີໂທລະພາບທ້ອງຖິ່ນດ້ວຍການບໍລິການໂທລະພາບແບບຈ່າຍຄ່າ, ທ່ານຈະຕ້ອງປ່ຽນກ່ອງປ່ຽນສັນຍານດິຈິຕອລ ເປັນອານາລອກ ເພື່ອເບິ່ງການແຜ່ພາບລະບົບດິຈິຕອລຈາກໂທລະພາບ.

### ຂໍ້ມູນເພີ່ມເຕີມ:

**1-888-CALL-FCC (ຂໍ້ຄວາມສຽງ)** | **DTV.gov** | **1-888-TELL-FCC (ໂທລະເລກ)**